


**ພິທີມອບ-ຮັບລາງວັນ**

# ທຄຕລ ໄດ້ຮັບ 7 ລາງວັນຈາກຕະຫຼາດຫຼັກຊັບລາວ (LSX'S AWARD ປະຈຳປີ 2025)

**ຂ່າວໂດຍ:** ຂະແໜງ ພົວພັນນັກລົງທຶນ ແລະ ຮ່ວມມືສາກົນ

https://www.bcel.com.la/

**Email:** bcelhqv@bcel.com.la




ໃນຕອນເຊົ້າວັນທີ 19 ທັນວາ 2025, ທີ່ຫ້ອງປະຊຸມໃຫ່ຍ ຕະຫຼາດຫຼັກຊັບລາວ, ທ່ານ ນ. ພູແສງທອງ ອານຸລັກຄຳ ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຂຶ້ນຮັບລາງວັນ LSX Award ປະຈຳປີ 2025 ເຊິ່ງໃຫ້ກຽດມອບລາງວັນໂດຍ ທ່ານ ສຽວສະຫວາດ ທິລາກຸນ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ (ຕລຊລ).

ພິທີມອບ-ຮັບລາງວັນດັ່ງກ່າວ ເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານແຕ່ລະດ້ານ ຂອງບັນດາບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ບໍລິສັດຫຼັກຊັບ ລວມເຖິງເປັນການຍ້ອງຍໍຊົມເຊີຍຕໍ່ບໍລິສັດທີ່ມີຜົນງານດີເດັ່ນ ໃນການດຳເນີນທຸລະກິດ, ການປະຕິບັດລະບຽບການ ແລະ ການສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ, ເຊິ່ງລາງວັນທີ່ ທຄຕລ ສາມາດຍາດໄດ້ໃນປີ **2025** ມີທັງໝົດ **7** ລາງວັນ

**ຂ່າວໂດຍ:** ຂະແໜງ ພົວພັນມັກລົງທຶນ ແລະ ຮ່ວມມືສາກົນ

https://www.bcel.com.la/

**Email:** bcelhqv@bcel.com.la

# ລາງວັນທີ່ ທຄຕລ ໄດ້ຮັບໄດ້ແກ່:

1) ລາງວັນການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ (Best Voluntary Disclosure Award)
2) ລາງວັນການຄຸ້ມຄອງບໍລິຫານດີເດັ່ນ (Best Corporate Governance Award)
3) ລາງວັນບໍລິສັດທີ່ມີຜົນການເຄື່ອນໄຫວທຸລະກິດດີເດັ່ນ (Best Performing Company Award)
4) ລາງວັນຜູ້ລົງທຶນສຳພັນດີເດັ່ນ (Best Investor Relations Award)
5) ລາງວັນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີດີເດັ່ນ (Best Annual Report Award)
6) ລາງວັນບໍລິສັດລະດົມທຶນດີເດັ່ນ (Best Fundraising Company Award)
7) ໃບຍ້ອງຍໍການເປີດເຜີຍຂໍ້ມູນປະຈຳປີ 2025 (Best Disclosure Certificate)







**ຂ່າວໂດຍ:** ຂະແໜງ ພົວພັນນັກລົງທຶນ ແລະ ຮ່ວມມືສາກົນ

https://www.bcel.com.la/

**Email:** bcelhqv@bcel.com.la